ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 036 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 30 APR 2021

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອໍານວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2020 ຄັ້ງວັນທີ 30/04/2021.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈໍາປີ 2020 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 09:00 ຫາ 11:30 ໂມງ ຂອງວັນທີ 30/04/2021 ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ຈ່າງລີ ກໍາມະການສະພາບໍລິຫານ ບຊລ, ພ້ອມດ້ວຍສະມາຊິກສະພາ ບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 20 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈໍານວນທັງໝົດ 8 ທ່ານ, ຜູ້ມອບສິດຈໍານວນ 12 ທ່ານ, ຊຶ່ງກວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງ ປະຊຸມເທົ່າກັບ 35,591,000 ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈໍານວນ ຮຸ້ນ ບຊລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສໍາລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈໍານວນ 4,413,000 ຮຸ້ນເທົ່າກັບ 11% ຂອງຈໍານວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1:** ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີຜ່ານມາ.

- **ວາລະທີ 2**: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2019.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 3**: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2020.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 4**: ພິຈາລະນາແລະຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດ ຂອງບໍລິສັດຊີມັງລາວ ມະຫາຊົນ ປະຈຳປີ 2020
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ແລະບໍ່ຈ່າຍເງິນປັນຜົນຂອງບໍລິສັດຊີມັງລາວມະຫາຊົນປະຈຳປີ 2020.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 6** : ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບພາຍນອກປີ 2021

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ



ຈ່າງລີ